**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ ເລກທີ...143.../ນຍ

ນະຄອນຫຼວງວຽງຈັນ, ວັນທີ...08.05.2017

# ດຳລັດ
# ຂອງນາຍົກລັດຖະມົນຕີ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 69/ສພຊ, ລົງວັນທີ 15 ທັນວາ 2015.
- ອີງຕາມ ກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ) ສະບັບເລກທີ 05/ສພຊ, ລົງວັນທີ 16 ກໍລະກົດ 2015.
- ອີງຕາມ ມະຕິຕົກລົງຂອງກົມການເມືອງສູນກາງພັກວ່າດ້ວຍການ ໂອນວຽກງານພັດທະນາຊັບພະຍາກອນມະນຸດ ຈາກຄະນະຈັດຕັ້ງສູນກາງພັກ ໃຫ້ແກ່ກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 02/ກມສພ, ລົງວັນທີ 06 ມິນາ 2013.
- ອີງຕາມ ມະຕິກອງປະຊຸມຄັ້ງທີ V ຂອງຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ສະບັບເລກທີ 028/ສສກ; ລົງວັນທີ 06 ມັງກອນ, 2017.
- ອີງຕາມ ໜັງສືສະເໜີຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 223/ສສກ ລົງວັນທີ 10 ກຸມພາ 2017.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີການເຮັດວຽກ, ການນຳໃຊ້ງົບປະມານ ແລະ ຕາປະທັບ ຂອງຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ເພື່ອເປັນບ່ອນອີງທາງດ້ານນິຕິກຳ ໃຫ້ແກ່ກຳມາທິການດັ່ງກ່າວໃນການຊີ້ນຳ ແລະ ຈັດຕັ້ງປະຕິບັດວຽກງານການພັດທະນາຊັບພະຍາກອນມະນຸດ ໃນຂອບເຂດທົ່ວປະເທດ ໃຫ້ດຳເນີນໄປຂອບແນວທາງນະໂຍບາຍຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງປະເທດໃນ ແຕ່ລະໄລຍະ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ມີຊື່ຫຍໍ້ວ່າ "ຄຊພຊ" ເປັນອົງການຈັດຕັ້ງຂອງລັດຖະບານ ທີ່ເຄື່ອນໄຫວບໍ່ປະຈຳການ, ຊຶ່ງມີຈຸດປະສານງານລວມ ແລະ ມີກອງເລຂາປະຈຳການ ກະຊວງສຶກສາທິການ ແລະ ກິລາ; ມີພາລະບົດບາດເປັນເສນາທິການ ໃຫ້ແກ່ສູນກາງພັກ ແລະ ລັດຖະບານ ກ່ຽວກັບວຽກງານການພັດທະນາຊັບພະຍາກອນມະນຸດ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ມີໜ້າທີ່ຕົ້ນຕໍ ດັ່ງນີ້:

3.1 ຄົ້ນຄວ້າສ້າງ ແລະ ປັບປຸງແຜນຍຸດທະສາດ, ຂອບນະໂຍບາຍລວມ, ແຜນປະຕິບັດງານການພັດທະນາຊັບພະຍາກອນມະນຸດ ໃນຂອບເຂດທົ່ວປະເທດເປັນແຕ່ລະໄລຍະ ໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ຂອງການພັດທະນາເສດຖະກິດ-ສັງຄົມຂອງປະເທດ ແລະ ການເຊື່ອມໂຍງກັບສາກົນ ບົນພື້ນຖານຕາມຄວາມຮຽກຮ້ອງຕ້ອງການ ຂອງອົງການຈັດຕັ້ງຂອງພັກ, ຂອງລັດ ແລະ ເອກະຊົນ ນັບແຕ່ສູນກາງລົງຮອດທ້ອງຖິ່ນ ແລ້ວສະເໜີລາຍງາຍຕໍ່ລັດຖະບານ ເພື່ອພິຈາລະນາຮັບຮອງ.

3.2 ຊີ້ນຳ, ຊຸກຍູ້ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງ ທີ່ກ່ຽວຂ້ອງທັງພາກລັດ ແລະ ເອກະຊົນ ໃນການຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດ, ນະໂຍບາຍ, ແຜນປະຕິບັດງານການພັດທະນາຊັບພະຍາກອນມະນຸດ ທີ່ລັດຖະບານຮັບຮອງເອົາແລ້ວນັ້ນ ໄປຈັດຕັ້ງປະຕິບັດ ໃຫ້ເປັນຮູບປະທຳ ແລະ ມີປະສິດທິຜົນ.

3.3 ຕິດຕາມ, ກວດກາ, ປະເມີນຜົນໃນການຈັດຕັ້ງປະຕິບັດແແຜນຍຸດທະສາດ, ແຜນປະຕິບັດງານການພັດທະນາຊັບພະຍາກອນມະນຸດ ນັບທັງດ້ານຄຸນນະພາບ ແລະ ຄວາມສອດຄ່ອງ ເປັນແຕ່ລະໄລຍະ.

3.4 ສະຫຼຸບ, ຖອດຖອນບົດຮຽນ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດແຜນຍຸດທະສາດ, ແຜນປະຕິບັດງານການພັດທະນາຊັບພະຍາກອນມະນຸດ ໃນແຕ່ລະໄລຍະໃຫ້ລັດຖະບານຮັບຊາບ ພ້ອມທັງຂໍທິດຊີ້ນຳຈາກລັດຖະບານ.

3.5 ສ້າງ ແລະ ນຳສະເໜີລັດຖະບານ ເພື່ອອອກນິຕິກຳທີ່ຈຳເປັນ ໃນການຈັດຕັ້ງປະຕິບັດແຜນຍຸດທະສາດ, ແຜນປະຕິບັດງານການພັດທະນາຊັບພະຍາກອນມະນຸດ.

3.6 ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງພັກ ແລະ ລັດຖະບານ.

**ມາດຕາ 4 ຂອບເຂດສິດ**

ຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ມີສິດດັ່ງນີ້:

4.1 ລະດົມທຸກກຳລັງແຮງໃນທົ່ວສັງຄົມ ທັງພາຍໃນ ແລະ ຕ່າງປະເທດ ເພື່ອປະກອບສ່ວນໃຫ້ແກ່ພາລະກິດການພັດທະນາຊັບພະຍາກອນມະນຸດ ໂດຍສະເພາະທາງດ້ານທຶນຮອນ ແລະ ດ້ານວິຊາການ.

4.2 ພົວພັນ, ປະສານງານ, ຮ່ວມມື, ແລກປ່ຽນບົດຮຽນ ແລະ ການສະໜອງຂໍ້ມູນຂ່າວສານ ກັບທຸກຂະແໜງການ ນັບແຕ່ສູນກາງລົງຮອດທ້ອງຖິ່ນພາຍໃນປະເທດ ກໍ່ຄືກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ບົນພື້ນຖານຢູ່ໃນຂອບແນວທາງນະໂຍບາຍຂອງພັກ, ລະບຽບຫຼັກການ ແລະ ກົດໝາຍຂອງລັດ.

4.3 ແຕ່ງຕັ້ງຄະນະກຳມະການດ້ານວິຊາການແຕ່ລະຂັ້ນ ພ້ອມທັງກຳນົດພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຄະນະກຳມະການດັ່ງກ່າວ.

4.4 ຮຽກໂຮມ ແລະ ຈັດກອງປະຊຸມລະດັບຊາດ ກ່ຽວກັບວຽກງານການພັດທະນາຊັບພະຍາກອນມະນຸດ.

4.5 ສະເໜີລັດຖະບານເພື່ອຍົກເລີກ, ລົບລ້າງແຜນຍຸດທະສາດ, ແຜນປະຕິບັດງານດັ່ງກ່າວ ທີ່ເຫັນວ່າບໍ່ສອດຄ່ອງ ແລະ ບໍ່ໄປຕາມແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມຂອງປະເທດ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບບຸກຄະລາກອນ

5.1 ຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ປະກອບມີບັນດາທ່ານ ໂດຍຕຳແໜ່ງ ດັ່ງນີ້:

1. ທ່ານ ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ — ເປັນປະທານ
2. ທ່ານ ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ — ເປັນຮອງປະທານ
3. ທ່ານ ຮອງຫົວໜ້າ ຄະນະຈັດຕັ້ງສູນກາງພັກ — ເປັນຮອງປະທານ
4. ທ່ານ ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ — ເປັນຮອງປະທານ
5. ທ່ານ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ, ສະພາແຫ່ງຊາດ — ເປັນກຳມະການ
6. ທ່ານ ຮອງລັດຖະມົນຕີ ກະຊວງການເງິນ — ເປັນກຳມະການ
7. ທ່ານ ຮອງລັດຖະມົນຕີ ກະຊວງພາຍໃນ — ເປັນກຳມະການ
8. ທ່ານ ຮອງລັດຖະມົນຕີ ກະຊວງການຕ່າງປະເທດ — ເປັນກຳມະການ
9. ທ່ານ ຮອງລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ — ເປັນກຳມະການ
10. ທ່ານ ຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ — ເປັນກຳມະການ
11. ທ່ານ ຮອງລັດຖະມົນຕີ ກະຊວງສາທາລະນະສຸກ — ເປັນກຳມະການ
12. ທ່ານ ຮອງລັດຖະມົນຕີ ກະຊວງຍຸຕິທຳ — ເປັນກຳມະການ
13. ທ່ານ ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ — ເປັນກຳມະການ
14. ທ່ານ ຮອງລັດຖະມົນຕີ ກະຊວງອຸດສະຫະກຳ ແລະ ການຄ້າ — ເປັນກຳມະການ
15. ທ່ານ ຮອງລັດຖະມົນຕີ ກະຊວງປ້ອງກັນປະເທດ — ເປັນກຳມະການ
16. ທ່ານ ຮອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ — ເປັນກຳມະການ
17. ທ່ານ ຮອງຫົວໜ້າສະຖາບັນການເມືອງ-ການປົກຄອງແຫ່ງຊາດ — ເປັນກຳມະການ
18. ທ່ານ ຮອງຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ — ເປັນກຳມະການ
19. ທ່ານ ຮອງຫົວໜ້າສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ — ເປັນກຳມະການ
20. ທ່ານ ຮອງປະທານສູນກາງສະຫະພັນແມ່ຍິງລາວ — ເປັນກຳມະການ
21. ທ່ານ ຮອງປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ — ເປັນກຳມະການ
22. ທ່ານ ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງວຽງຈັນ ຜູ້ຊີ້ນຳວຽກງານວັດທະນະທຳ-ສັງຄົມ — ເປັນກຳມະການ
23. ທ່ານ ຫົວໜ້າກົມແຜນການ, ກະຊວງສຶກສາທິການ ແລະ ກິລາ — ເປັນກຳມະການ

5.2 ກອງເລຂາຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ມີຫົວໜ້າ, ຮອງຫົວໜ້າ ແລະ ພະນັກງານຊ່ວຍວຽກຈຳນວນໜຶ່ງ ຊຶ່ງແມ່ນຫົວໜ້າກົມ, ຮອງຫົວໜ້າກົມ ແລະ ພະນັກງານຂອງກົມແຜນການ, ກະຊວງສຶກສາທິການ ແລະ ກິລາ ເປັນໂດຍຕຳແໜ່ງ.

**ມາດຕາ 6 ໂຄງປະກອບກົງຈັກ**

6.1 ຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ມີກົງຈັກການປະສານງານຢູ່ກະຊວງສຶກສາທິການ ແລະ ກິລາ ແລະ ຖືເອົາກົມແຜນການຂອງກະຊວງສຶກສາທິການ ແລະ ກິລາ ເປັນກົງຈັກຊ່ວຍວຽກ ເອີ້ນວ່າ: "ກອງເລຂາ".

6.2 ຄະນະກຳມະການພັດທະນາຊັບພະຍາກອນມະນຸດ ລະດັບກະຊວງ ແລະ ອົງການທຽບເທົ່າ ກະຊວງ ປະກອບດ້ວຍກົມກ່ຽວຂ້ອງ ໂດຍຖືເອົາກົມຈັດຕັ້ງ ແລະ ພະນັກງານ ເປັນກອງເລຂາ ທີ່ແຕ່ງຕັ້ງໂດຍ ທ່ານລັດຖະມົນຕີ ຫຼື ຫົວໜ້າອົງການທຽບເທົ່າ.

6.3 ຄະນະກຳມະການພັດທະນາຊັບພະຍາກອນມະນຸດ ລະດັບແຂວງ, ນະຄອນຫຼວງ ປະກອບດ້ວຍບັນດາພະແນກການ ແລະ ເມືອງຕ່າງໆ ໂດຍມີຮອງເຈົ້າເມືອງຜູ້ຊີ້ນຳວຽກງານວັດທະນະທຳ-ສັງຄົມ ແລະ ຫົວໜ້າ ຫ້ອງການສຶກສາທິການ ແລະ ກິລາເມືອງ ໂດຍຖືເອົາພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ເປັນກອງເລຂາ ທີ່ແຕ່ງຕັ້ງໂດຍທ່ານເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.

## ໝວດທີ 4
## ຫຼັກການ, ແບບແຜນວິທີການເຮັດວຽກ

**ມາດຕາ 7 ຫຼັກການ**

ຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດເຮັດວຽກຕາມ ຫຼັກການລວມສູນປະຊາທິປະໄຕ, ຕົກລົງແກ້ໄຂບັນຫາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ສຽງສ່ວນໜ້ອຍຂຶ້ນກັບສຽງສ່ວນຫຼາຍ ບົນພື້ນຖານຢູ່ໃນຂອບນະໂຍບາຍຂອງພັກ, ລະບຽບຫຼັກການ ແລະ ກົດໝາຍ ຂອງລັດ.

**ມາດຕາ 8 ແບບແຜນວິທີການເຮັດວຽກ**

ຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ມີແບບແຜນວິທີການເຮັດວຽກ ດັ່ງນີ້:

8.1 ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ ປະຕິບັດ ແລະ ແກ້ໄຂວຽກງານຢ່າງມີຈຸດສຸມ ປະສານງານສົມທົບຢ່າງແໜ້ນແຟ້ນກັບທຸກຂະແໜງການທັງສູນກາງ, ທ້ອງຖິ່ນ ແລະ ອົງການຈັດຕັ້ງຕ່າງໆ ຕາມນະໂຍບາຍຂອງພັກ ແລະ ລະບຽບກົດໝາຍ ຂອງລັດ.

8.2 ເຮັດວຽກມີການ ກວດກາ, ຕິດຕາມ, ຊຸກຍູ້, ປະເມີນຜົນ, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຜົນເສຍ ຂອງການພັດທະນາຊັບພະຍາກອນມະນຸດ.

8.3 ປະຕິບັດລະບອບລາຍງານໃຫ້ລັດຖະບານເປັນປົກກະຕິ.

**ມາດຕາ 9 ການດຳເນີນກອງປະຊຸມ**

ຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ປະຕິບັດລະບອບກອງປະຊຸມ ດັ່ງນີ້:

9.1 ກອງປະຊຸມສະໄໝສາມັນຄົບຄະນະຈັດຕັ້ງຂຶ້ນປີລະ 01 ຄັ້ງ, ໃນກໍລະນີຈຳເປັນອາດຈະຈັດກອງປະຊຸມ ວິສາມັນຄົບຄະນະຂຶ້ນຕາມຄວາມເປັນຈິງ ແລະ ຮີບດ່ວນຂອງວຽກງານ.

9.2 ການດຳເນີນກອງປະຊຸມແຕ່ລະຄັ້ງ ຕ້ອງປະກອບດ້ວຍຄະນະກຳມາທິການຫຼາຍກວ່າເຄິ່ງໜຶ່ງຂຶ້ນໄປຈຶ່ງສາມາດເປີດກອງປະຊຸມໄດ້.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 10 ງົບປະມານ ແລະ ຕາປະທັບ**

ງົບປະມານຮັບໃຊ້ສຳລັບການເຄື່ອນໄຫວ ຂອງຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ແມ່ນຂຶ້ນກັບງົບປະມານປະຈຳປີຂອງກະຊວງສຶກສາທິການ ແລະ ກິລາ ໂດຍມີແຫຼ່ງມາຈາກງົບປະມານຂອງລັດ, ເງິນຊ່ວຍເຫຼືອຈາກການຮ່ວມມືຂອງບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ການປະກອບສ່ວນຂອງພາກເອກະຊົນ, ອົງການຈັດຕັ້ງສັງຄົມ.

ຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ນຳໃຊ້ຕາປະທັບລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ສຳລັບກອງເລຂາ ນຳໃຊ້ຕາປະທັບຂອງກົມແຜນການ, ກະຊວງສຶກສາທິການ ແລະ ກິລາ ເພື່ອເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 11 ການຈັດຕັ້ງປະຕິບັດ**

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ບັນດາທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້, ໃຫ້ການຮ່ວມມືຈັດຕັ້ງປະຕິບັດດຳລັດ ສະບັບຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

**ມາດຕາ 12 ຜົນສັກສິດ**

ດຳລັດສະບັບນີ້ ປ່ຽນແທນດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ສະບັບເລກທີ 315/ນຍ, ລົງວັນທີ 22 ມີນາ 2013 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ